ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 25 ຫາ 29 ພະຈິກ 2024



ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ລົງຊຸກຍູ້ການຜະລິດທີ່ແຂວງ ຈຳປາສັກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ລົງຊຸກຍູ້ ການຜະລິດທີ່ ແຂວງ ຈຳປາສັກ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 11 ພະຈິກ 2024 ນີ້ ທີ່ຫ້ອງວ່າການປົກຄອງແຂວງ ຈຳປາສັກ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເຂົ້າຢ້ຽມຢາມພົບປະ ທ່ານ ອາລຸນໄຊ ສູນນະລາດ ເຈົ້າແຂວງ ແຂວງຈຳປາສັກ ມີບັນດາທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງ ການເຂົ້າຢ້ຽມຢາມພົບປະແມ່ນເພື່ອລາຍງານການເຄື່ອນໄຫວ ລົງຊຸກຍູ້ຕິດ ຕາມການຜະລິດກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ພາຍໃນແຂວງ ເວົ້າລວມ, ເວົ້າສະເພາະແມ່ນການຈັດຕັ້ງປະຕິບັດວຽກງານ ຂອງຂະແໜງກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ ໂດຍ ສະເພາະແມ່ນລົງຊຸກຍູ້ ການຜະລິດກະສິກຳ ເພື່ອບໍລິໂພກພາຍໃນ, ຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານທີ່ມີໂພຊະນາການ ແລະ ການຜະລິດເປັນສິນຄ້າ ເພື່ອສົ່ງອອກ, ຊຸກຍູ້ ວຽກງານການກຳນົດຈຸດສຸມການຜະລິດ ທີ່ເປັນທ່າແຮງຂອງແຂວງ, ການຈັດສັນການແບ່ງດິນແບ່ງປ່າ, ການຄຸ້ມຄອງປ່າໄມ້ ລວມທັງ ຕິດຕາມຄວາມດຸນດ່ຽງ ກ່ຽວກັບວຽກງານການຈໍລະຈອນສິນຄ້າ.

ໂອກາດນີ້, ທ່ານ ອາລຸນໄຊ ສູນນະລາດ ເຈົ້າແຂວງ ແຂວງຈຳປາສັກ ໄດ້ກ່າວຕ້ອນຮັບ ພ້ອມທັງລາຍງານສະພາບການລວມຂອງແຂວງຈຳປາສັກ ກ່ຽວກັບວຽກງານຈຸດສຸມ ໃນກະກຽມ ການເປີດກອງປະຊຸມໃຫຍ່ສາມຂັ້ນຂອງພັກ, ການປະຕິບັດວຽກງານເຄັ່ງຮ້ອນ ກໍຄືການແກ້ໄຂ ເສດຖະກິດ,

ແກ້ໄຂຂອດຂັ້ນທີ່ບໍ່ຈຳເປັນ, ສຸມໃສ່ການທັນເປັນທັນສະໄໝ ໂດຍສະເພາະໃນ ຂະແໜງການເງິນ, ການຄ້າ, ການເກັບຄ່າບໍລິການ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ຈ່າຍຜ່ານລະບົບທະນາຄານ,ຊຸກຍູ້ການຜະລິດກະສິກຳປຸງແຕ່ງ ເລັ່ງໃສ່ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ, ການຄ້າ-ການລົງທຶນ, ການບໍລິການ, ສົ່ງເສີມການຜະລິດຂອງປະຊາຊົນ, ກຸ່ມ ສະຫະກອນ, ຄຸ້ມຄອງບັນດາຜູ້ປະກອບການນຳເຂົ້າ-ສົ່ງອອກສິນຄ້າ,ລາຍການສິນຄ້ານຳເຂົ້າ-ສົ່ງອອກ, ສິນຄ້າກະສິກຳທີ່ສາມາດຜະລິດໄດ້ກຸ້ມຕົນເອງເຮັດໃຫ້ລາຍຮັບຂອງແຂວງຢູ່ໃນອັດຕາທີ່ເພີ່ມຂຶ້ນໃນແຕ່ລະປີ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;